**ມິຊຊາອາທິດທີ 7 ກຳນົດປາສກາ**

**ວັນທີ 2 ມິຖຸນາ 2019**



**ພຣະວໍລະສານໂດຍນັກບຸນຢວງ 17, 20-26**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງແຫງນພຣະພັກຂຶ້ນຟ້າແລະພາວະນາວ່າ: ລູກບໍ່ວອນຂໍສຳລັບແຕ່ພວກເຫລົ່ານີ້ເທົ່ານັ້ນ ແຕ່ຍັງວອນຂໍເພື່ອທຸກຄົນທີ່ຈະເຊື່ອເຖິງລູກຍ້ອນຖ້ອຍຄຳຂອງພວກເຂົາ. ເພື່ອໃຫ້ທຸກຄົນເປັນໜຶ່ງດຽວໃນພຣະບິດາ ຄືພຣະອົງຢູ່ໃນລູກແລະລູກໃນພຣະອົງ; ເພື່ອໃຫ້ພວກເຂົາເປັນໜຶ່ງດຽວໃນພວກເຮົາດ້ວຍ. ເພື່ອໃຫ້ໂລກເຊື່ອວ່າແມ່ນພຣະອົງທີ່ໄດ້ສົ່ງລູກມາ. ສ່ວນລູກໄດ້ມອບກຽດຊຶ່ງໄດ້ຮັບຈາກພຣະອົງນັ້ນໃຫ້ແກ່ພວກເຂົາເພື່ອພວກເຂົາຈະໄດ້ເປັນໜຶ່ງດຽວກັນ ຄືພວກເຮົາເປັນໜຶ່ງດຽວນັ້ນແລ. ລູກຢູ່ໃນພວກເຂົາແລະພຣະອົງຢູ່ໃນລູກ ເພື່ອພວກເຂົາຈະໄດ້ເປັນໜຶ່ງດຽວຢ່າງຄົບຖ້ວນ. ເພື່ອໃຫ້ໂລກຮູ້ວ່າພຣະອົງໄດ້ສົ່ງລູກມາແລະພຣະອົງໄດ້ຮັກພວກເຂົາເໝືອນດັ່ງພຣະອົງໄດ້ຮັກລູກນັ້ນແລ.

ໂອພຣະບິດາເຈົ້າ, ສ່ວນພວກທີ່ພຣະອົງໄດ້ມອບໃຫ້ລູກນັ້ນ, ລູກຢູ່ບ່ອນໃດ ລູກກໍປະສົງໃຫ້ພວກເຂົາຢູ່ກັບລູກບ່ອນນັ້ນດ້ວຍ ເພື່ອໃຫ້ພວກເຂົາໄດ້ຊົມສີມຸງຄຸນຂອງລູກຊຶ່ງພຣະອົງໄດ້ປະທານໃຫ້; ຍ້ອນພຣະອົງໄດ້ຮັກລູກຕັ້ງແຕ່ກ່ອນສ້າງໂລກ. ໂອພຣະບິດາຜູ້ຊອບທຳ, ໂລກບໍ່ໄດ້ຮັບຮູ້ພຣະອົງ. ສ່ວນລູກໄດ້ຮັບຮູ້ພຣະອົງແລະພວກນີ້ກໍໄດ້ຮັບຮູ້ວ່າແມ່ນພຣະອົງໄດ້ສົ່ງລູກມາ. ລູກໄດ້ທຳໃຫ້ເຂົາຮູ້ເຖິງພຣະນາມຂອງພຣະອົງ ແລະຈະທຳໃຫ້ເຂົາຮູ້ຕໍ່ໄປ; ເພື່ອໃຫ້ຄວາມຮັກຊຶ່ງພຣະອົງມີຕໍ່ລູກໄດ້ຢູ່ໃນພວກເຂົາແລະໃຫ້ລູກເອງໄດ້ຢູ່ໃນພວກເຂົາດ້ວຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢທ 17, 20-26**

ວາຈາຂອງພຣະເຈົ້າຊຶ່ງພວກເຮົາໄດ້ຟັງວັນນີ້, ເປັນຄຳສົນທະນາຂອງພຣະເຢຊູເຈົ້າກັບພຣະບິດາ ຊຶ່ງພວກເຮົາຮຽກວ່າບົດພາວະນາຂອງພຣະເຢຊູເຈົ້າ. ນັກບຸນຢວງຜູ້ຂຽນພຣະວໍລະສານໄດ້ບັນລະຍາຍບົດພາວະນາຂອງພຣະເຢຊູເຈົ້ານີ້ຫລັງຈາກອາຫານຄ່ຳຄັ້ງສຸດທ້າຍໃນວັນພຣະຫັດກ່ອນວັນທີ່ພຣະເຢຊູເຈົ້າຈະຮັບທໍລະມານແລະຕາຍ. ເປັນຫຍັງພຣະເຢຊູເຈົ້າຈຶ່ງຕ້ອງພາວະນາຢ່າງຍືດຍາວກັບພຣະບິດາ? ເນື້ອຫາຂອງບົດພາວະນານີ້ມີຫຍັງແດ່? ພຣະເຢຊູເຈົ້າພາວະນາເພື່ອວອນຂໍສຳລັບພຣະອົງບໍຫລືສຳລັບພວກເຮົາ?

ມີສິ່ງໜຶ່ງທີ່ພຣະວໍລະສານໂດຍນັກບຸນຢວງຢາກຖ່າຍທອດໃຫ້ພວກເຮົາຮູ້ຈັກນັ້ນຄືພຣະເຢຊູເຈົ້າໄດ້ຮູ້ເຫັນລ່ວງໜ້າເຖິງສິ່ງທີ່ຈະເປັນມາກັບພຣະອົງອັນແມ່ນ ການທໍລະຍົດຂອງຢູດາ, ການທໍລະມານແລະຕາຍ ແລະເປັນຕົ້ນ, ພຣະເຢຊູເຈົ້າຮູ້ດີວ່າເມື່ອສິ່ງເຫລົ່ານັ້ນຈະເປັນມາກັບພຣະອົງ ພວກລູກສິດຈະມີຄວາມຢ້ານກົວແລະແຕກແຍກກັນ ເໝືອນດັ່ງຝູງແກະທີ່ຂາດນາຍຊຸມພາບານ. ດັ່ງນັ້ນ, ພຣະເຢຊູເຈົ້າຈຶ່ງວອນຂໍພຣະບິດາເຈົ້າໃຫ້ພວກທີ່ເຊື່ອໃນພຣະອົງແລະພວກທີ່ຈະເຊື່ອໃນຄຳເທດສອນຂອງພວກສາວົກ, ໃຫ້ພວກເຂົາມີຄວາມສາມັກຄີເປັນໜຶ່ງດຽວກັນ ດັ່ງພຣະເຢຊູເຈົ້າເປັນໜຶ່ງດຽວກັບພຣະບິດາ. ຄວາມເປັນໜຶ່ງດຽວກັນນີ້ສະທ້ອນໃຫ້ໂລກຮູ້ວ່າພວກເຮົາເປັນລູກສິດຂອງພຣະເຢຊູເຈົ້າ ຍ້ອນພວກເຮົາເຊື່ອໃນວາຈາຂອງພຣະອົງແລະໝາກຜົນແຫ່ງຄວາມເຊື່ອແລະການປະຕິບັດວາຈານີ້ຄືຄວາມຮັກແພງສະໜິດສຳພັນ. ຄວາມຮັກແພງເປັນໜຶ່ງດຽວກັນນີ້ເປັນສິ່ງທີ່ພຣະເຢຊູເຈົ້າປະຕິບັດເລື້ອຍມາໃນຊີວິດຂອງພຣະອົງໃນຄວາມສຳພັນກັບພຣະບິດາແລະພຣະຈິດ. ແລະພຣະອົງກໍປາດຖະໜາໃຫ້ທຸກຄົນທີ່ເຊື່ອໃນພຣະອົງໄດ້ເຂົ້າຮ່ວມໃນຄວາມສະໜິດສຳພັນແຫ່ງຄວາມຮັກໃນພຣະຕີຣເອກະນຸພາບນີ້. ດັ່ງນັ້ນ, ຄຳສັ່ງລາສຸດທ້າຍ ຫລືເວົ້າອີກຢ່າງຄືບົດພິໄນກຳຂອງພຣະເຢຊູເຈົ້າທີ່ຝາກໄວ້ນຳພວກເຮົາ ຄືໃຫ້ພວກເຮົາຮັກແພງແລະເປັນໜຶ່ງດຽວກັນ. ແລະແນ່ນອນຢູ່ບ່ອນໃດມີຄວາມສາມັກຄີຮັກແພງກັນ ພຣະເຢຊູເຈົ້າກໍຈະຢູ່ບ່ອນນັ້ນດ້ວຍ.

ໃນຊີວິດຄວາມເຊື່ອຂອງພວກເຮົາ, ພວກເຮົາມັກຈະພາວະນາໃຫ້ຜູ້ເປັນ, ຜູ້ເຈັບປ່ວຍ ແລະຜູ້ຕາຍ. ນອກນັ້ນ, ພວກເຮົາຍັງພາວະນາວອນຂໍຫລາຍສິ່ງຫລາຍຢ່າງນຳພຣະເຈົ້າສຳລັບຕົວເອງ. ແຕ່ວັນນີ້ຜ່ານທາງວາຈາຂອງພຣະເຈົ້າ, ພວກເຮົາເຫັນວ່າພຣະເຢຊູເຈົ້າພາວະນາວອນຂໍນຳພຣະບິດາເຈົ້າເພື່ອພວກເຮົາແຕ່ລະຄົນ ອັນເປັນສິ່ງວິເສດເລີດແທ້.

ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ ສະທ້ອນໃຫ້ພວກເຮົາເຫັນເຖິງຄວາມສະໜິດສຳພັນຂອງພຣະເຢຊູເຈົ້າກັບພຣະບິດາໃນຄຳພາວະນາ. ດັ່ງນັ້ນ, ທຸກຄັ້ງທີ່ພວກເຮົາພາວະນາ, ພວກເຮົາກໍເຂົ້າສູ່ການສົນທະນາກັບພຣະບິດາເຈົ້າແລະພຣະເຢຊູຜ່ານທາງຄວາມຮັກຂອງພຣະຈິດ. ເພື່ອພວກເຮົາຈະໄດ້ເປັນໜຶ່ງດຽວກັບພຣະບິດາ, ພຣະບຸດແລະພຣະຈິດ. ແລະແນ່ນອນໝາກຜົນແຫ່ງຄວາມສະໜິດສຳພັນກັບພຣະເຈົ້ານີ້ຈະນຳພວກເຮົາໄປສູ່ຄວາມຮັກແພງສາມັກຄີລະຫວ່າງພວກເຮົາຜູ້ທີ່ເຊື່ອໃນພຣະອົງຢ່າງນັ້ນດ້ວຍ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ